ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້
ຫ້ອງການ

ເລກທີ 1790 /ຫກ
ນະຄອນຫຼວງວຽງຈັນ, 21 AUG 2013

# ແຈ້ງການແນະນຳ

ຮຽນ: ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ຂໍ້ກຳນົດເງື່ອນໄຂການສົ່ງອອກສາລີ ຈາກ ສປປ ລາວ ໄປ ຣາຊະອານາຈັກໄທ.

- ອີງຕາມ ກົດໝາຍ ວ່າດ້ວຍ ການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 09 ທັນວາ 2008;
- ອີງຕາມ ດຳລັດ ແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ ສະບັບເລກທີ 229/ລບ, ລົງວັນທີ 31 ພຶດສະພາ 2012;
- ອີງຕາມ ປະກາດ ຂອງກົມວິຊາການກະເສດຂອງ ຣາຊະອານາຈັກໄທ ພສ 2556, ລົງວັນທີ 28/06/2013.
- ອີງຕາມ ການລາຍງານຂອງກົມປູກຝັງ ສະບັບເລກທີ 1182/ກປຝ, ລົງວັນທີ 07/08/2013.

ຫ້ອງການກະຊວງ ກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໃນໄລຍະຜ່ານມາ, ການສົ່ງຝັກສາລີ ຫຼື ມານສາລີ (Corn ear), ເມັດສາລີ (Corn grain) ແລະ ແກນສາລີ (Corn cob) ຂອງ ສປປ ລາວ ໄປຍັງ ຣາຊະອານາຈັກໄທ ຍັງບໍ່ທັນສອດຄ່ອງກັບມາດຕະການ ສຸຂານາໄມ ແລະ ສຸຂານາໄມພືດ (SPS) ແລະ ການອອກ ໃບຢັ້ງຢືນສຸຂານາໄມພືດ ຍັງບໍ່ທັນໄປຕາມລະບົບມາດຕະຖານສາກົນ, ດ້ານສຸຂານາໄມພືດ ຂອງອົງການປ້ອງກັນພືດສາກົນ ຕາມທີ່ທາງການຂອງໄທຕ້ອງການ. ຜ່ານການວິໄຈຄວາມສ່ຽງສັດຕູພືດ (PRA) ຂອງຄະນະວິຊາການກົມປູກຝັງ ຮ່ວມກັບຜູ້ຊ່ຽວຊານອາວຸໂສ ຈາກປະເທດໄທໃນປີ 2012 ເຫັນວ່າ ເປົ້າໝາຍສັດຕູພືດຕ້ອງຄວບຄຸມແມ່ນມອດເຈາະເມັດສາລີ (*Khapra beetle, Trogoderma granarium*), ເຊິ່ງກົມວິຊາການກະເສດຂອງ ຣາຊະອານາຈັກໄທ ໄດ້ອອກແຈ້ງການ ກ່ຽວກັບ ຂໍ້ກຳນົດເງື່ອນໄຂການນຳເຂົ້າສາລີ ຈາກ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປຍັງ ຣາຊະອານາຈັກໄທ, ພສ 2556, ລົງວັນທີ 28/08/2013.

ດັ່ງນັ້ນ, ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ສົ່ງອອກສາລີ ແລະ ຜູ້ດຳເນີນທຸລະກິດດ້ານສຸຂານາໄມພືດ ຫຼີກເວັ້ນຜົນກະທົບດ້ານລົບ ຕໍ່ ສິນຄ້າກະສິກຳສົ່ງອອກ ຂອງ ສປປ ລາວ ໄປຕ່າງປະເທດ ພ້ອມທັງຮັບປະກັນການປະຕິບັດລະບຽບການດ້ານສຸຂານາໄມພືດສາກົນ ແລະ ປະເທດປາຍທາງນັ້ນ, ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ຈຶ່ງອອກແຈ້ງການ ດັ່ງນີ້:

ກ່ອນສົ່ງອອກ ສາລີ ຈາກ ສປປ ລາວ ໄປ ຣາຊະອານາຈັກໄທ, ຜູ້ສົ່ງອອກຕ້ອງປະຕິບັດຕາມຂັ້ນຕອນ ດັ່ງລຸ່ມນີ້:

1. ການຂໍອະນຸຍາດນຳເຂົ້າ

- ຕ້ອງຂໍໃບອະນຸຍາດນຳເຂົ້າຂອງໄທ ເຊິ່ງອອກໃຫ້ໂດຍກົມວິຊາການກະເສດ ຂອງປະເທດໄທ;
- ຕ້ອງນຳເຂົ້າໂດຍມີຈຸດປະສົງ ເພື່ອໃຊ້ເປັນວັດຖຸດິບສຳລັບການຜະລິດພາກອຸດສາຫາກຳໂດຍມີ ເອກະສານຢັ້ງຢືນ ກ່ຽວກັບ ການເຮັດທຸລະກິດ ຄັດຕິດໃຫ້ທາງການກ່ຽວຂ້ອງຂອງໄທ.

2. ວິທີການຂົນສົ່ງ

- ຕ້ອງແມ່ນສາລີ ມາຈາກພື້ນທີ່ໃດໜຶ່ງຂອງ ສປປ ລາວ ຂົນສົ່ງໄປປະເທດໄທ ໃນລັກສະນະເປັນສິນຄ້າທາງບົກ ຫຼື ທາງນໍ້າ;
- ຕ້ອງຂົນສົ່ງໂດຍພາຫະນະທີ່ຫຸ້ມປົກປິດເປັນຢ່າງດີ.

3. ຂໍ້ກຳນົດເງື່ອນໄຂ ສຳລັບການນຳເຂົ້າ

- ບໍ່ມີແມງໄມ້ສັດຕູພືດຕ້ອງຫ້າມຂອງ ຣາຊະອານາຈັກໄທ ແລະ ບໍ່ມີສິ່ງເຈືອປົນຂອງ ດິນ, ຫີນ, ຊາຍ ແລະ ສິ່ງເຈືອປົນອື່ນໆ
- ການກຳຈັດສັດຕູພືດມີ:
  (1) ຕ້ອງຜ່ານການຮົມຢາຂ້າເຊື້ອດ້ວຍສານ ເມີທີນໂບຣມາຍ (Methyl bromide) ໂດຍປະຕິບັດດັ່ງລຸ່ມນີ້:

| ອຸນຫະພູມ | ອັດຕາ (ກຼາມຕໍ່ $m^3$) | ໄລຍະເວລາ (ຊົ່ວໂມງ) |
|---|---|---|
| 21 ອົງສາ ຫຼື ສູງກວ່າ | 80 | 48 |
| 16-20 ອົງສາ | 88 | 48 |
| 11-15 ອົງສາ | 96 | 48 |
| 10 ອົງສາ | 104 | 48 |

ໝາຍເຫດ: ຖ້ານຳໃຊ້ສານຟົດສຟີນ (Phosphine), ໃຊ້ອັດຕາ 8g/$m^3$ ໄລຍະເວລາ 160 ຊົ່ວໂມງ.

(2) ຜູ້ປະກອບການຮົມຢາຕ້ອງໄດ້ຮັບການຂຶ້ນທະບຽນວິຊາການນຳກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ແຫ່ງ ສປປ ລາວ;
(3) ຕ້ອງມີໃບຢັ້ງຢືນການຮົມຢາ ຄັດຕິດໄປກັບຊຸດສິນຄ້າ ທຸກໆຄັ້ງທີ່ສົ່ງສິນຄ້າເຂົ້າ ປະເທດໄທ;
(4) ຕ້ອງລະບຸລາຍລະອຽດການນຳໃຊ້ສານຮົມຢາຂ້າເຊື້ອໃສ່ໃນໃບຢັ້ງຢືນສຸຂານາໄມພືດ.

4. ການຢັ້ງຢືນສຸຂານາໄມພືດ

- ຕ້ອງມີໃບຢັ້ງຢືນສຸຂານາໄມພືດຕົ້ນສະບັບເຊິ່ງອອກໃຫ້ໂດຍເຈົ້າໜ້າທີ່ ທີ່ໄດ້ຮັບການແຕ່ງຕັ້ງ ຈາກ ອົງການຄຸ້ມຄອງວຽກງານປ້ອງກັນພືດ (ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້) ຕິດໄປພ້ອມກັບ ສິນຄ້າໃນທຸກໆຄັ້ງທີ່ສົ່ງສິນຄ້າໄປປະເທດໄທ;
- ໃບຢັ້ງຢືນສຸຂານາໄມພືດຕ້ອງລະບຸຂໍ້ຄວາມເພີ່ມຕື່ມ ດັ່ງລຸ່ມນີ້:

"The consignments were produced and prepared for export in accordance with the conditions for import of (imported plant part) from Lao PDR to Thailand." ແລະ "The consignments were inspected and found free from *Trogoderma granarium*."

5. ການກວດກາການນຳເຂົ້າຂອງໄທ

- ເມື່ອສິນຄ້າ (ສາລີ) ຖືກຂົນສົ່ງເຖິງດ່ານຣາຊະອານາຈັກໄທແລ້ວ ການກວດກາສິນຄ້າຈະໄດ້ດຳເນີນການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງເອກະສານທັງໝົດທີ່ຄັດຕິດມາກັບສິນຄ້າ;
- ພະນັກງານກັກກັນພືດຈະສຸ່ມຕົວຢ່າງສາລີ ແລະ ກວດກາເພື່ອຢັ້ງຢືນວ່າ ບໍ່ມີແມງໄມ້ສັດຕູພືດ ແລະ ສິ່ງທີ່ມີຊີວິດຊະນິດອື່ນທີ່ເປັນສັດຕູພືດຕ້ອງຫ້າມ ຂອງຣາຊະອານາຈັກໄທ ແລະ ສິ່ງເຈືອປົນອື່ນໆ;
- ໃນກໍລະນີການນຳເຂົ້າບໍ່ປະຕິບັດຕາມເງື່ອນໄຂທີ່ທາງການຂອງໄທກຳນົດໄວ້ຕ້ອງຖືກສົ່ງກັບ, ທຳລາຍ ຫຼື ກຳຈັດສັດຕູພືດດ້ວຍວິທີທີ່ເໝາະສົມ ໂດຍຜູ້ປະກອບການ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ.

6. ການເຜີຍແຜ່ຂໍ້ມູນຂ່າວສານ ແລະ ສ້າງຄວາມຮັບຮູ້ໃຫ້ແກ່ສັງຄົມ

ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ທີ່ມີດ່ານປ້ອງກັນພືດຊາຍແດນທີ່ຕິດກັບປະເທດໄທຕ້ອງເຜີຍແຜ່ຂໍ້ມູນຂ່າວສານໃຫ້ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງຮັບຊາບ ເປັນຕົ້ນຜູ້ຜະລິດ, ຜູ້ປະກອບການ ແລະ ເຈົ້າໜ້າທີ່ຂະແໜງການຕ່າງໆ ປະຈຳດ່ານຊາຍແດນ ເຂົ້າ-ອອກ ກ່ຽວກັບ ສັດຕູພືດຕິດແປດກັບສາລີ ທີ່ເປັນເປົ້າໝາຍກວດກາ, ເງື່ອນໄຂການອະນຸຍາດນຳເຂົ້າຂອງປະເທດປາຍທາງ, ຂັ້ນຕອນການອະນຸຍາດ ນຳເຂົ້າ-ສົ່ງອອກ ແລະ ການແຈ້ງເອກະສານຢູ່ດ່ານປ້ອງກັນພືດ ເພື່ອອຳນວຍຄວາມສະດວກໃຫ້ແກ່ການສົ່ງອອກ ຝັກສາລີ, ເມັດສາລີ ແລະ ແກນສາລີ ຈາກ ສປປ ລາວ ໄປຍັງ ຣາຊະອານາຈັກໄທ ໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງຕາມລະບຽບການກັກກັນພືດຂອງປະເທດປາຍທາງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນກ່ຽວຂ້ອງເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ.

ຊ.ທ. ຫົວໜ້າຫ້ອງການກະຊວງກະສິກຳ ແລະ ປ່າໄມ້

ທ. ອິໄລພອນ ວໍລະພົມ

ບ່ອນນຳສົ່ງ:

- ລັດຖະມົນຕີວ່າການກະຊວງ ກ.ປ. — 01 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)
- ລັດຖະມົນຕີຊ່ວຍວ່າການກະຊວງ ກ.ປ, ທ່ານລະ — 01 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)
- ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ — 01 ສະບັບ (ເພື່ອລາຍງານ)
- ຫ້ອງການກະຊວງການເງິນ (ກົມພາສີ) — 01 ສະບັບ (ເພື່ອລາຍງານ)
- ບັນດາກົມອ້ອມຂ້າງກະຊວງ ກ.ປ. — 01 ສະບັບ
- ກົມຄຸ້ມຄອງການນຳເຂົ້າ-ສົ່ງອອກ, ກະຊວງ ອ.ຄ — 01 ສະບັບ
- ກົມສົ່ງເສີມ ພັດທະນາສິນຄ້າ, ກະຊວງ ອ.ຄ — 01 ສະບັບ
- ກົມນະໂຍບາຍ ການຄ້າຕ່າງປະເທດ, ກະຊວງ ອ.ຄ — 01 ສະບັບ
- ເກັບມ້ຽນ — 01 ສະບັບ